ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຊາວໜຸ່ມຮາກຖານ ທຫລ ຍົກລະດັບຄວາມຮູ້ ດ້ານວຽກງານວິຊາສະເພາະ




ໃນວັນທີ 23 ພຶດສະພາ 2018 ຜ່ານມານີ້ ທີ່ຫ້ອງປະຊຸມໃຫ່ຍທະນາຄານແຫ່ງ ສປປ ລາວ (ທຫລ),ນະຄອນຫຼວງວຽງຈັນ ຄະນະຊາວໜຸ່ມຮາກຖານ ທຫລ ໄດ້ຈັດຕັ້ງການສໍາມະນາພາຍໃຕ້ຫົວຂໍ້: “ວຽກງານການຄຸ້ມຄອງສະຖາບັນການເງິນ ແລະ ດໍາລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ” ໂດຍການເປັນປະທານຂອງສະຫາຍ ບຸນທະວີ ສຸກດາວົງ ຮອງຫົວໜ້າກົມເງິນຕາ, ເລຂາຊາວໜຸ່ມຮາກຖານ ທຫລ  ພ້ອມນີ້, ກໍ່ມີບັນສະມາຊິກຊາວໜຸ່ມຮາກຖານພາຍໃນ ທຫລ ເຂົ້າຮ່ວມ.

ການຈັດສໍາມະນາຄັ້ງນີ້ໄດ້ດໍາເນີນໄປເປັນເວລາເຄິ່ງວັນ ເຊິ່ງຜູ້ເຂົ້າຮ່ວມຈະໄດ້ຮັບຟັງການບັນຍາຍຈາກໜ່ວຍຊາວໜຸ່ມກົມຄຸ້ມຄອງສະຖາບັນການເງິນ ແລະ ໜ່ວຍຊາວໜຸ່ມຫ້ອງການເຊັ່ນ: ຮູບແບບສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ, ຂັ້ນຕອນການຂໍອະນຸຍາດດໍາເນີນທຸລະກິດຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຄວາມຮອບຮູ້ເລື່ອງເງິນ, ລັກສະນະຂອງທຸລະກິດຕ່ອງໂສ້ ແລະ ດໍາລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍເຊິ່ງປະກອບບັນດາຫຼັກການ ແລະ ມາດຕະການໃນການຄຸ້ມຄອງ ແລະ ນໍາໃຊ້ງົບປະມານຂອງລັດໃຫ້ມີປະສິດທິຜົນ ເພື່ອໃຫ້ບັນດາສະມາຊິກຊາວໜຸ່ມມີສະຕິຕື່ນຕົວ ແລະ ເປັນເຈົ້າການປະກອບສ່ວນໃນການປະຢັດ ແລະ ຕ້ານການຟູມເຟືອຍ.




ສະຫາຍ ເລຂາ ຊາວໜຸ່ມຮາກຖານ ທຫລ ໄດ້ເນັ້ນວ່າ: ການຈັດສໍາມະນາດ້ານວຽກງານວິຊາສະເພາະວຽກງານການຄຸ້ມຄອງສະຖາບັນການເງິນ ແລະ ດໍາລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ໃນເທື່ອນີ້ກໍ່ເພື່ອຍົກລະດັບຄວາມຮູ້ໃຫ້ແກ່ສະມາຊິກຊາວໜຸ່ມ ຮາກຖານ ທຫລ ກ່ຽວກັບວຽກງານສະຖາບັນການເງິນ ແລະ ສ້າງຄວາມເຂົ້າໃຈໃຫ້ແກ່ບັນດາສະມາຊິກຊາວໜຸ່ມຮາກຖານ ທຫລ ໄດ້ເຂົ້າໃຈແຈ້ງກ່ຽວກັບວຽກງານສະຖາບັນການເງິນທັງນັ້ນກໍ່ເພື່ອໃຫ້ບັນດາສະມາຊິກເປັນສ່ວນໜຶ່ງທີ່ສາມາດຕິດຕາມກວດກາການເຄື່ອນໄຫວຂອງສະຖາບັນການເງິນທີ່ໄດ້ຮັບອະນຸຍາດຈາກ ທຫລ ມີການເຄື່ອນໄຫວຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການທີ່ ທຫລ ວາງອອກ. ພ້ອມທັງມີການຕິດຕາມກວດກາບັນດາພາກສ່ວນບໍລິສັດ ຫຼື ບັນດາກຸ່ມຄົນທີ່ເຄື່ອນໄຫວດໍາເນີນທຸລະກິດດ້ານການເງິນ ແລະ ລະດົມທຶນ ບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງບ້ານເມືອງ; ສໍາລັບດໍາລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ" ໄດ້ມີການກໍານົດບັນດາຫຼັກການ ແລະ ມາດຕະການໃນການຄຸ້ມຄອງ ແລະ ນໍາໃຊ້ງົບປະມານຂອງລັດ ໃຫ້ມີປະສິດທິຜົນແນໃສ່ເພື່ອເຮັດໃຫ້ພະນັກງານລັດຖະກອນທຸກຄົນ ມີສະຕິຕື່ນຕົວ ແລະ ເປັນເຈົ້າການໃນການປະກອບສ່ວນປະຢັດ ແລະ ຕ້ານການຟູມເຟືອຍໃນທຸກຮູບແບບ.

**# ພາບ-ຂ່າວ: ສົມອົກ ເຄນຄໍາແພງ**

# ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ